# ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ

pwc

## ເອກະສານລາຍງານການເງິນກາງປີ (ທົບທວນຄືນ)

ສຳລັບໄລຍະຫົກເດືອນຕົ້ນປີສິ້ນສຸດວັນທີ 30 ມິຖຸນາ 2021



www.pwc.com/la

**ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ**

**ເອກະສານລາຍງານການເງິນກາງປີ (ທົບທວນຄືນ)**
**ສໍາລັບໄລຍະຫົກເດືອນຕົ້ນປີສິ້ນສຸດວັນທີ 30 ມິຖຸນາ 2021**

| **ສາລະບານ** | **ໜ້າ** |
|---|---|
| ບົດລາຍງານການທົບທວນຄືນຂອງເອກະສານລາຍງານການເງິນກາງປີໂດຍຜູ້ກວດສອບ | 1 |
| ໃບລາຍງານຜົນການດໍາເນີນງານ | 2 |
| ໃບລາຍງານຜົນການດໍາເນີນງານສັງລວມ | 3 |
| ໃບລາຍງານຖານະການເງິນ | 4 |
| ໃບລາຍງານສ່ວນປ່ຽນແປງທຶນ | 5 |
| ໃບລາຍງານກະແສເງິນສົດ | 6-7 |
| ບົດອະທິບາຍຊ້ອນທ້າຍຂອງເອກະສານລາຍງານການເງິນກາງປີ ໂດຍຫຍໍ້ | 8-21 |

pwc

## ບົດລາຍງານການທົບທວນຄືນຂອງເອກະສານລາຍງານການເງິນກາງປີໂດຍຜູ້ກວດສອບ

**ເຖິງ: ຜູ້ຖືຮຸ້ນ ແລະ ສະພາຜູ້ອຳນວຍການ ຂອງ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ**

ພວກເຮົາ ໄດ້ດຳເນີນການທົບທວນຄືນ ເອກະສານລາຍງານການເງິນກາງປີ ຂອງທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທະນາຄານ), ເຊິ່ງປະກອບດ້ວຍໃບລາຍງານຖານະການເງິນ ສໍາລັບຫົກເດືອນຕົ້ນປີສິ້ນສຸດວັນທີ 30 ມິຖຸນາ 2021, ໃບລາຍງານຜົນການດໍາເນີນງານ, ໃບລາຍງານຜົນການດໍາເນີນງານສັງລວມ, ໃບລາຍງານສ່ວນປ່ຽນແປງທຶນ, ໃບລາຍງານກະແສເງິນສົດ ສໍາລັບໄລຍະຫົກເດືອນຕົ້ນປີສິ້ນສຸດວັນທີດຽວກັນ ແລະ ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນກາງປີ ໂດຍຫຍໍ້. ຜູ້ບໍລິຫານຂອງບໍລິສັດ ມີໜ້າທີ່ຮັບຜິດຊອບໃນການກະກຽມເອກະສານລາຍງານການເງິນກາງປີ ເພື່ອໃຫ້ສອດຄ່ອງກັບນະໂຍບາຍການບັນຊີຂອງທະນາຄານ ຕາມທີ່ໄດ້ກໍານົດໄວ້ໃນບົດອະທິບາຍຊ້ອນທ້າຍໃນຂໍ້ທີ 3 ແລະ 4 ຂອງເອກະສານລາຍງານການເງິນສະບັບນີ້. ສ່ວນພວກເຮົາແມ່ນຮັບຜິດຊອບໃນການສະຫຼຸບກ່ຽວກັບເອກະສານລາຍງານການເງິນກາງປີ ດັ່ງກ່າວ ບົນພື້ນຖານການທົບທວນຄືນຂອງພວກເຮົາ.

**ຂອບເຂດການທົບທວນຄືນ**

ພວກເຮົາໄດ້ດໍາເນີນການທົບທວນຄືນ ໂດຍສອດຄ່ອງກັບມາດຕະຖານການທົບທວນຄືນແບບສາກົນ 2410 "ການທົບທວນຄືນ ເອກະສານລາຍງານການເງິນກາງປີ ໂດຍຜູ້ກວດສອບອິດສະຫຼະ". ການທົບທວນຄືນໄດ້ໃຊ້ວິທີການສອບຖາມບຸກຄະລາກອນທີ່ຮັບຜິດຊອບ ຕໍ່ຝ່າຍບັນຊີ-ການເງິນ ແລະ ໄດ້ດໍາເນີນການວິເຄາະປຽບທຽບຂໍ້ມູນທີ່ກ່ຽວຂ້ອງ ແລະ ວິທີການທົບທວນຄືນອື່ນໆ. ການທົບທວນຄືນນີ້ມີຂອບເຂດຈໍາກັດກວ່າການກວດສອບຕາມມາດຕະຖານການກວດສອບສາກົນ. ສະນັ້ນ, ການທົບທວນຄືນ ຈຶ່ງບໍ່ສາມາດໃຫ້ຄວາມເຊື່ອໝັ້ນທຽບເທົ່າການກວດສອບຕໍ່ສິ່ງທີ່ເປັນສາລະສໍາຄັນທັງໝົດ ທີ່ອາດຈະພົບເຫັນໃນການກວດສອບຂອງພວກເຮົາໄດ້. ດັ່ງນັ້ນ, ພວກເຮົາຈະບໍ່ສະແດງຄວາມເຫັນ.

**ການສະຫຼຸບ**

ບົນພື້ນຖານການທົບທວນຄືນຂອງພວກເຮົາ, ບໍ່ມີສິ່ງໃດທີ່ເປັນສາເຫດໃຫ້ເຊື່ອວ່າ ເອກະສານລາຍງານການເງິນກາງປີຂອງທະນາຄານ ສໍາລັບຫົກເດືອນຕົ້ນປີສິ້ນສຸດ 30 ມິຖຸນາ 2021 ດັ່ງກ່າວ, ບໍ່ໄດ້ກະກຽມຂໍ້ມູນທີ່ຖືກຕ້ອງ ໃນລັກສະນະທີ່ຖືວ່າມີຄວາມສໍາຄັນຫຼາຍຕາມນະໂຍບາຍການບັນຊີທີ່ໄດ້ອະທິບາຍໄວ້ໃນ ຂໍ້ທີ 3 ແລະ 4 ໃນເອກະສານລາຍງານການເງິນສະບັບນີ້.

ບໍລິສັດ ພຣາຍສວໍເຕີເຮົ້າສຄູບເປີສ (ລາວ) ຈໍາກັດຜູ້ດຽວ

ໂດຍ: ທ່ານ ອະພິສິດ ທ່ຽງຕົງພົມໂຍ
ຜູ້ຖືຮຸ້ນ

ນະຄອນຫຼວງວຽງຈັນ, ສປປ ລາວ
ວັນທີ: 30 ສິງຫາ 2021

## ໃບລາຍງານຜົນການດຳເນີນງານ
## ສຳລັບໄລຍະຫົກເດືອນຕົ້ນປີສິ້ນສຸດວັນທີ 30 ມິຖຸນາ 2021

| | ບົດ ອະທິບາຍ | 30 ມິຖຸນາ 2021 ລ້ານກີບ | 30 ມິຖຸນາ 2020 ລ້ານກີບ |
|---|---|---|---|
| ລາຍຮັບດອກເບ້ຍ | | 1.296.539 | 1.202.862 |
| ລາຍຈ່າຍດອກເບ້ຍ | | (724.550) | (635.405) |
| **ລາຍຮັບສຸດທິຈາກດອກເບ້ຍ** | 5 | **571.989** | **567.457** |
| ລາຍຮັບຄ່າທຳນຽມ ແລະ ຄ່າບໍລິການ | | 138.903 | 124.758 |
| ລາຍຈ່າຍຄ່າທຳນຽມ ແລະ ຄ່າບໍລິການ | | (16.455) | (13.733) |
| **ລາຍຮັບສຸດທິຈາກຄ່າທຳນຽມ ແລະ ຄ່າບໍລິການ** | 6 | **122.448** | **111.025** |
| ກຳໄລ(ຂາດທຶນ)ສຸດທິ ຈາກການຊື້-ຂາຍເງິນຕາຕ່າງປະເທດ | | 17.274 | 16.909 |
| ຂາດທຶນສຸດທິ ຈາກການຊື້-ຂາຍເອກະສານອານຸພັນ | | (91) | - |
| ລາຍຮັບອື່ນໆຈາກການດຳເນີນງານ | | 58.426 | 10.481 |
| **ລາຍຮັບສຸດທິຈາກການດຳເນີນງານ** | | **770.046** | **705.872** |
| ລາຍຈ່າຍໃນການສູນເສຍຂອງເງິນໃຫ້ກູ້ຢືມແກ່ລູກຄ້າ | | (394.336) | (351.835) |
| ການສູນເສຍຄ່າເສື່ອມມູນຄ່າຂອງການລົງທຶນການເງິນ | | (4.602) | (36.049) |
| **ລາຍຮັບສຸດທິຈາກການດຳເນີນງານ** | | **371.108** | **317.988** |
| ລາຍຈ່າຍບຸກຄະລາກອນ | | (170.926) | (138.939) |
| ຄ່າຫຼຸ້ຍຫ້ຽນ ແລະ ຄ່າເສື່ອມມູນຄ່າ | | (40.541) | (36.263) |
| ຄ່າຫຼຸ້ຍຫ້ຽນຂອງສິດນຳໃຊ້ຊັບສິນ | | (4.188) | (3.187) |
| ລາຍຈ່າຍອື່ນໆໃນການດຳເນີນງານ | 7 | (88.751) | (77.359) |
| **ລວມລາຍຈ່າຍໃນການດຳເນີນງານ** | | **(304.406)** | **(255.748)** |
| ສ່ວນແບ່ງກຳໄລ(ຂາດທຶນ)ໃນວິສາຫະກິດຂາຮຸ້ນ ແລະ ວິສາຫະກິດປະສົມ | | 12.875 | 12.306 |
| **ກຳໄລກ່ອນອາກອນ** | | **79.577** | **74.546** |
| ລາຍຈ່າຍອາກອນກຳໄລ | 19 | (42.277) | (29.805) |
| **ກຳໄລສຸດທິພາຍໃນໄລຍະ** | | **37.300** | **44.741** |
| ກຳໄລຕໍ່ຮຸ້ນ (ກີບ) | 8 | 180 | 215 |

ກະກຽມໂດຍ:

ທ່ານ ນ. ພູແສງທອງ ອານຸລັກຄຳ
ຫົວໜ້າພະແນກບັນຊີສັງລວມ

ອະນຸມັດໂດຍ:

ທ່ານ ຄຳໝອນ ວັນຊະນະ
ຮອງຫົວໜ້າພະແນກກວດກາພາຍໃນ

ອະນຸມັດໂດຍ:

ທ່ານ ນາລິນ ສີລະວົງສິດ
ຮອງອຳນວຍການ

ນະຄອນຫລວງວຽງຈັນ, ສປປ ລາວ
ວັນທີ: 30 ສິງຫາ 2021

*ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນ ໜ້າທີ 8 ຫາ 21 ແມ່ນຖືເປັນພາກສ່ວນໜຶ່ງຂອງເອກະສານລາຍງານການເງິນກາງປີເຫຼົ່ານີ້.*

## ໃບລາຍງານຜົນການດຳເນີນງານສັງລວມ
## ສຳລັບໄລຍະຫົກເດືອນຕົ້ນປີສິ້ນສຸດວັນທີ 30 ມິຖຸນາ 2021

| | 30 ມິຖຸນາ 2021<br>ລ້ານກີບ | 30 ມິຖຸນາ 2020<br>ລ້ານກີບ |
|---|---|---|
| **ກຳໄລສຸດທິພາຍໃນໄລຍະ** | **37.300** | **44.741** |
| **ລາຍຮັບໆ** | | |
| ການສູນເສຍການປະເມີນຄືນຜົນປະໂຫຍດພະນັກງານຫຼັງອອກການທີ່ກຳນົດໄວ້ | (2.630) | (1.464) |
| **ລາຍຈ່າຍ(ລາຍຮັບ) ພາຍໃນໄລຍະ, ສຸດທິຈາກອາກອນ** | **(2.630)** | **(1.464)** |
| **ລວມລາຍຮັບອື່ນ ພາຍໃນໄລຍະ, ສຸດທິຈາກອາກອນ** | **34.670** | **43.277** |

ກະກຽມໂດຍ:

ທ່ານ ນ. ພູແສງທອງ ອານຸລັກຄຳ
ຫົວໜ້າພະແນກບັນຊີສັງລວມ

ອະນຸມັດໂດຍ:

ທ່ານ ຄຳໝອນ ວັນຊະນະ
ຮອງຫົວໜ້າພະແນກກວດກາພາຍໃນ

ອະນຸມັດໂດຍ:

ທ່ານ ນາລິນ ສີລະວົງສິດ
ຮອງອຳນວຍການ

ນະຄອນຫລວງວຽງຈັນ, ສປປ ລາວ
ວັນທີ: 30 ສິງຫາ 2021

ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນ ໜ້າທີ 8 ຫາ 21 ແມ່ນຖືເປັນພາກສ່ວນໜຶ່ງຂອງເອກະສານລາຍງານການເງິນກາງປີ ເຫຼົ່ານີ້.

## ໃບລາຍງານຖານະການເງິນ
## ໃນວັນທີ 30 ມິຖຸນາ 2021

| | ບົດ ອະທິບາຍ | 30 ມິຖຸນາ 2021 ລ້ານກີບ | 31 ທັນວາ 2020 ລ້ານກີບ |
|---|---|---|---|
| **ຊັບສິນ** | | | |
| ເງິນສົດ ແລະ ເງິນຝາກຢູ່ທະນາຄານແຫ່ງ ສປປ ລາວ | | 16.264.953 | 12.836.829 |
| ເງິນຝາກຢູ່ທະນາຄານອື່ນ | 9 | 5.394.569 | 4.355.395 |
| ເງິນໃຫ້ກູ້ຢືມແກ່ລູກຄ້າ | 10 | 31.512.691 | 30.762.417 |
| ການລົງທຶນທາງການເງິນ - ປະເພດມີໄວ້ເພື່ອຂາຍ | 11 | 85.521 | 90.122 |
| ການລົງທຶນທາງການເງິນ - ປະເພດຖືໄວ້ຈົນຄົບກຳນົດ | 12 | 4.281.194 | 3.899.011 |
| ການລົງທຶນໃນວິສາຫະກິດຂາຮຸ້ນ ແລະ ວິສາຫະກິດປະສົມ | 13 | 627.304 | 614.434 |
| ຊັບສິນບັດຄົງທີ່ ແລະ ອຸປະກອນ | 14 | 613.207 | 601.572 |
| ຊັບສິນບັດຄົງທີ່ບໍ່ມີຕົວຕົນ | 15 | 248.142 | 245.873 |
| ສິດໃນການນຳໃຊ້ຊັບສິນ | | 57.366 | 57.005 |
| ອາກອນຊັບສິນເບື່ອນຊຳລະ | | 37.015 | 37.015 |
| ຊັບສິນອື່ນໆ | | 442.698 | 470.734 |
| **ລວມຊັບສິນ** | | **59.564.660** | **53.970.407** |
| **ໜີ້ສິນ ແລະ ທຶນ** | | | |
| **ໜີ້ສິນ** | | | |
| ໜີ້ຕ້ອງສົ່ງທະນາຄານ ແລະ ສະຖາບັນການເງິນອື່ນໆ | 16 | 4.236.236 | 3.482.800 |
| ໜີ້ຕ້ອງສົ່ງໃຫ້ລູກຄ້າ | 17 | 49.819.784 | 45.043.495 |
| ເງິນກູ້ຢືມຈາກທະນາຄານອື່ນ | 18 | 3.061.443 | 2.962.101 |
| ໜີ້ຕ້ອງສົ່ງອາກອນໃນປີ | 19 | 49.286 | 23.726 |
| ໜີ້ຕ້ອງສົ່ງສັນຍາເຊົ່າ | | 25.724 | 23.059 |
| ໜີ້ສິນອື່ນໆ | | 240.813 | 222.197 |
| **ລວມໜີ້ສິນ** | | **57.433.286** | **51.757.378** |
| **ທຶນ** | | | |
| ທຶນຈົດທະບຽນ | 20 | 1.038.617 | 1.038.617 |
| ຄັງສະສົມຕາມລະບຽບການ | 21 | 831.665 | 753.399 |
| ການປະເມີນຄືນຜົນປະໂຫຍດພະນັກງານຫຼັງອອກການທີ່ກຳນົດໄວ້ | | (15.246) | (12.616) |
| ກຳໄລສະສົມ | | 276.338 | 433.629 |
| **ລວມທຶນ** | | **2.131.374** | **2.213.029** |
| **ລວມໜີ້ສິນ ແລະ ທຶນ** | | **59.564.660** | **53.970.407** |

| ກະກຽມໂດຍ: | ອະນຸມັດໂດຍ: | ອະນຸມັດໂດຍ: |
|---|---|---|
| ທ່ານ ນ. ພູແສງທອງ ອານຸລັກຄຳ | ທ່ານ ຄຳໝອນ ວັນຊະນະ | ທ່ານ ນາລິນ ສີລະວົງສິດ |
| ຫົວໜ້າພະແນກບັນຊີສັງລວມ | ຮອງຫົວໜ້າພະແນກກວດກາພາຍໃນ | ຮອງອຳນວຍການ |

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ BANQUE POUR LE COMMERCE EXTERIEUR LAO PUBLIC ນະຄອນຫລວງ

ນະຄອນຫລວງວຽງຈັນ, ສປປ ລາວ
ວັນທີ: 30 ສິງຫາ 2021

ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນ ໜ້າທີ 8 ຫາ 21 ແມ່ນຖືເປັນພາກສ່ວນໜຶ່ງຂອງເອກະສານລາຍງານການເງິນກາງປີ ເຫຼົ່ານີ້.

**ໃບລາຍງານສ່ວນປ່ຽນແປງທຶນ**
**ສໍາລັບໄລຍະຫົກເດືອນຕົ້ນປີສິ້ນສຸດວັນທີ 30 ມິຖຸນາ 2021**

| | ທຶນຈົດທະບຽນ<br>ລ້ານກີບ | ຄັງສະສົມຕາມລະບຽບການ<br>ລ້ານກີບ | ການປະເມີນຄືນຜົນປະໂຫຍດພະນັກງານຫຼັງອອກການທີ່ກໍານົດໄວ້<br>ລ້ານກີບ | ກໍາໄລສະສົມ<br>ລ້ານກີບ | ລວມ<br>ລ້ານກີບ |
|---|---|---|---|---|---|
| **ຍອດເຫຼືອໃນວັນທີ 31 ທັນວາ 2020** | **1.038.617** | **753.399** | **(12.616)** | **433.629** | **2.213.029** |
| ເງິນປັນຜົນຈ່າຍ (ບົດອະທິບາຍຂໍ້ທີ 22) | - | - | - | (116.325) | (116.325) |
| ກໍາໄລສຸດທິພາຍໃນໄລຍະ | - | - | - | 37.300 | 37.300 |
| ແບ່ງເຂົ້າຄັງສະສົມຕາມລະບຽບການພາຍໃນປີ 2020 (ບົດອະທິບາຍຂໍ້ທີ 21) | - | 78.266 | - | (78.266) | - |
| ການປະເມີນຄືນຜົນປະໂຫຍດພະນັກງານຫຼັງອອກການທີ່ກໍານົດໄວ້ | - | - | (2.630) | - | (2.630) |
| **ຍອດເຫຼືອໃນວັນທີ 30 ມິຖຸນາ 2021** | **1.038.617** | **831.665** | **(15.246)** | **276.338** | **2.131.374** |
| | | | | | |
| **ຍອດເຫຼືອໃນວັນທີ 31 ທັນວາ 2019** | **1.038.617** | **604.423** | **(12.082)** | **508.271** | **2.139.229** |
| ເງິນປັນຜົນຈ່າຍ | - | - | - | (168.879) | (168.879) |
| ກໍາໄລສຸດທິພາຍໃນໄລຍະ | - | - | - | 44.741 | 44.741 |
| ແບ່ງເຂົ້າຄັງສະສົມຕາມລະບຽບການພາຍໃນປີ 2019 | - | 148.976 | - | (148.976) | - |
| ການປະເມີນຄືນຜົນປະໂຫຍດພະນັກງານຫຼັງອອກການທີ່ກໍານົດໄວ້ | - | | (1.464) | - | (1.464) |
| **ຍອດເຫຼືອໃນວັນທີ 30 ມິຖຸນາ 2020** | **1.038.617** | **753.399** | **(13.546)** | **235.157** | **2.013.627** |

| ກະກຽມໂດຍ: | ອະນຸມັດໂດຍ: | ອະນຸມັດໂດຍ: |
|---|---|---|
| ທ່ານ ນ. ພູແສງທອງ ອານຸລັກຄໍາ | ທ່ານ ຄໍາໝອນ ວັນຊະນະ | ທ່ານ ນາລິນ ສີລະວົງສິດ |
| ຫົວໜ້າພະແນກບັນຊີສັງລວມ | ຮອງຫົວໜ້າພະແນກກວດກາພາຍໃນ | ຮອງອໍານວຍການ |

ທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ BANQUE POUR LE COMMERCE EXTERIEUR LAO PUBLIC

ນະຄອນຫລວງວຽງຈັນ, ສປປ ລາວ
ວັນທີ: 30 ສິງຫາ 2021

ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນ ໜ້າທີ 8 ຫາ 21 ແມ່ນຖືເປັນພາກສ່ວນໜຶ່ງຂອງເອກະສານລາຍງານການເງິນກາງປີ ເຫຼົ່ານີ້.

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ

ໃບລາຍງານກະແສເງິນສົດ
ສຳລັບໄລຍະຫົກເດືອນຕົ້ນປີສິ້ນສຸດວັນທີ 30 ມິຖຸນາ 2021

| | ບົດ ອະທິບາຍ | 30 ມິຖຸນາ 2021 ລ້ານກີບ | 30 ມິຖຸນາ 2020 ລ້ານກີບ |
|---|---|---|---|
| **ກິດຈະກຳການດຳເນີນງານ** | | | |
| **ກຳໄລກ່ອນຫັກອາກອນ** | | **79.577** | **74.546** |
| *ດັດແກ້ສຳລັບ:* | | | |
| ລາຍຈ່າຍຄ່າຫລຸ້ຍຫ້ຽນ ແລະ ຄ່າເສື່ອມມູນຄ່າ | 14,15 | 40.541 | 36.263 |
| ຄ່າຫຼູ້ຍຫ້ຽນສິດຂອງການໃຊ້ຊັບສິນ | | 4.188 | 3.187 |
| ລາຍຈ່າຍຄ່າເສື່ອມມູນຄ່າ | 10 | 394.336 | 351.835 |
| ການສູນເສຍມູນຄ່າໃນການລົງທຶນທາງການເງິນ - ປະເພດມີໄວ້ເພື່ອຂາຍ | | 4.602 | 36.049 |
| ສ່ວນແບ່ງກຳໄລແລະຂາດທຶນໃນວິສາຫະກິດຂາຮຸ້ນ ແລະ ວິສາຫະກິດປະສົມ | 13 | (12.875) | (12.306) |
| ລາຍຈ່າຍຜົນປະໂຫຍດພະນັກງານຫຼັງອອກການທີ່ກຳນົດໄວ້ | | 2.399 | 3.126 |
| ຂາດທຶນຈາກການຂາຍ/ສະສາງຊັບສິນຄົງທີ່ | | 4.683 | - |
| ຂາດທຶນຈາກອັດຕາແລກປ່ຽນທີ່ຍັງບໍ່ໄດ້ເກີດຂຶ້ນຈິງ | | 47.727 | 109.610 |
| ລາຍຮັບດອກເບ້ຍ | | (1.296.539) | (1.202.862) |
| ລາຍຈ່າຍດອກເບ້ຍ | | 724.550 | 635.405 |
| ລາຍຮັບເງິນປັນຜົນ | | (3.835) | (3.835) |
| **ກະແສເງິນສົດຈາກ ກຳໄລຈາກການດຳເນີນງານກ່ອນການປ່ຽນແປງດ້ານຊັບສິນ ແລະ ໜີ້ສິນ** | | **(10.646)** | **31.018** |
| *ສ່ວນປ່ຽນແປງໃນຊັບສິນຈາກການດຳເນີນງານ* | | | |
| ສ່ວນປ່ຽນແປງເງິນຝາກຢູ່ທະນາຄານອື່ນສຸດທິ | | 890.920 | (531.694) |
| ສ່ວນປ່ຽນແປງເງິນໃຫ້ກູ້ຢືມແກ່ລູກຄ້າສຸດທິ | | (927.561) | (1.265.012) |
| ສ່ວນປ່ຽນແປງການລົງທຶນທາງການເງິນ - ປະເພດຖືໄວ້ຈົນຄົບກຳນົດ | | 56.650 | 74.172 |
| ສ່ວນປ່ຽນແປງໃນຊັບສິນອື່ນໆ | | 28.999 | (33.483) |
| *ສ່ວນປ່ຽນແປງໃນໜີ້ສິນຈາກການດຳເນີນງານ* | | | |
| ສ່ວນປ່ຽນແປງໃນໜີ້ຕ້ອງສົ່ງທະນາຄານ ແລະ ສະຖາບັນການເງິນອື່ນໆ ສຸດທິ | | 744.367 | (54.159) |
| ສ່ວນປ່ຽນແປງໃນໜີ້ຕ້ອງສົ່ງໃຫ້ລູກຄ້າສຸດທິ | | 4.728.738 | 3.522.750 |
| ສ່ວນປ່ຽນແປງໃນເງິນກູ້ຢືມຈາກທະນາຄານອື່ນສຸດທິ | | (12.479) | (771.697) |
| ສ່ວນປ່ຽນແປງໃນໜີ້ສິນອື່ນໆສຸດທິ | | 6.815 | 326.678 |
| ດອກເບ້ຍທີ່ໄດ້ຮັບ | | 588.997 | 543.951 |
| ດອກເບ້ຍທີ່ໄດ້ຈ່າຍ | | (614.323) | (612.203) |
| ອາກອນທີ່ໄດ້ຊຳລະພາຍໃນໄລຍະ | 19 | (16.717) | (20.676) |
| **ກະແສເງິນສົດສຸດທິຈາກກິດຈະກຳການດຳເນີນງານ** | | **5.463.760** | **1.209.645** |
| | | | |
| **ກິດຈະກຳການລົງທຶນ** | | | |
| ຊື້ ແລະ ກໍ່ສ້າງຊັບສິນບັດຄົງທີ່ | | (47.787) | (20.580) |
| ຊື້ຊັບສິນຄົງທີ່ບໍ່ມີຕົວຕົນ | | (3.471) | 514 |
| ຮັບເງິນຈາກການຂາຍຊັບສິນບັດຄົງທີ່ | | 318 | - |
| ຊື້ສິດການນຳໃຊ້ | | (1.061) | (3.481) |
| ເງິນປັນຜົນຮັບຈາກວິສາຫະກິດຂາຮຸ້ນ ແລະ ວິສາຫະກິດປະສົມ | 13 | 1.365 | 1.596 |
| ເງິນປັນຜົນຮັບຈາກການລົງທຶນທາງການເງິນ - ປະເພດມີໄວ້ເພື່ອຂາຍ | | 3.835 | 3.835 |
| ຈ່າຍເງິນສຳລັບການລົງທຶນໃນວິສາຫະກິດຂາຮຸ້ນ ແລະ ວິສາຫະກິດປະສົມ | 13 | (1.360) | (1.360) |

ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນ ໜ້າທີ 8 ຫາ 21 ແມ່ນຖືເປັນພາກສ່ວນໜຶ່ງຂອງເອກະສານລາຍງານການເງິນກາງປີ ເຫຼົ່ານີ້.

**ໃບລາຍງານກະແສເງິນສົດ**
**ສໍາລັບໄລຍະຫົກເດືອນຕົ້ນປີສິ້ນສຸດວັນທີ 30 ມິຖຸນາ 2021**

| | ບົດ ອະທິບາຍ | 30 ມິຖຸນາ 2021 ລ້ານກີບ | 30 ມິຖຸນາ 2020 ລ້ານກີບ |
|---|---|---|---|
| **ກິດຈະກໍາການລົງທຶນ (ຕໍ່)** | | | |
| ຮັບເງິນຈາກເງິນລົງທຶນໃນການລົງທຶນທາງການເງິນ - ປະເພດຖືໄວ້ຈົນຄົບກໍານົດ | 12 | 67.789 | - |
| **ກະແສເງິນສົດສຸດທິທີ່ໄດ້ນໍາໃຊ້ໃນກິດຈະກໍາການລົງທຶນ** | | **19.628** | **(19.476)** |
| **ກິດຈະກໍາທາງການເງິນ** | | | |
| ຈ່າຍເງິນປັນຜົນ | 22 | (116.325) | (168.879) |
| ຈ່າຍເງິນສໍາລັບການຊໍາລະສັນຍາເຊົ່າ | | (2.713) | - |
| **ກະແສເງິນສົດສຸດທິທີ່ນໍາໃຊ້ໃນກິດຈະກໍາທາງການເງິນ** | | **(119.038)** | **(168.879)** |
| **ປ່ຽນແປງສຸດທິ ຂອງເງິນສົດ ແລະ ທຽບເທົ່າເງິນສົດ** | | **5.364.350** | **1.021.290** |
| **ເງິນສົດ ແລະ ທຽບເທົ່າເງິນສົດຕົ້ນໄລຍະ** | | **14.396.829** | **11.722.384** |
| **ເງິນສົດ ແລະ ທຽບເທົ່າເງິນສົດທ້າຍໄລຍະ** | 23 | **19.761.179** | **12.743.674** |
| **ກິດຈະກໍາການລົງທຶນທີ່ບໍ່ແມ່ນເງິນສົດ** | | | |
| ການໄດ້ມາຂອງລາຍການການກໍ່ສ້າງກໍາລັງດໍາເນີນ ແລະ ຊັບສົມບັດຄົງທີ່ | | 8.188 | |
| ເພີ່ມຂຶ້ນສໍາລັບລາຍການສິດໃນການນໍາໃຊ້ຊັບສິນ | | 3.489 | |
| ການຊໍາລະສະສາງກູ້ຢືມເງິນໃຫ້ລູກຄ້າ ແລະ ການລົງທຶນໃນຫຼັກຊັບ ປະເພດຖືໄວ້ຈົນຄົບກໍານົດ | | 925.502 | |

| ກະກຽມໂດຍ: | ອະນຸມັດໂດຍ: | ອະນຸມັດໂດຍ: |
|---|---|---|
| ທ່ານ ນ. ພູແສງທອງ ອານຸລັກຄໍາ | ທ່ານ ຄໍາໝອນ ວັນຊະນະ | ທ່ານ ນາລິນ ສີລະວົງສິດ |
| ຫົວໜ້າພະແນກບັນຊີສັງລວມ | ຮອງຫົວໜ້າພະແນກກວດກາພາຍໃນ | ຮອງອໍານວຍການ |

ທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ BANQUE POUR LE COMMERCE EXTERIEUR LAO PUBLIC

ນະຄອນຫຼວງວຽງຈັນ, ສປປ ລາວ.
ວັນທີ: 30 ສິງຫາ 2021

ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນ ໜ້າທີ 8 ຫາ 21 ແມ່ນຖືເປັນພາກສ່ວນໜຶ່ງຂອງເອກະສານລາຍງານການເງິນກາງປີ ເຫຼົ່ານີ້.

## 1. ຂໍ້ມູນກ່ຽວກັບທະນາຄານ

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທະນາຄານ) ແມ່ນທະນາຄານມະຫາຊົນ ທີ່ຈົດທະບຽນໃນຕະຫຼາດຫຼັກຊັບໃນ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (LSX).

ທະນາຄານ ໄດ້ສ້າງຕັ້ງ ແລະ ມີພູມລໍາເນົາຢູ່ໃນ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແລະ ມີລາຍລະອຽດກ່ຽວກັບ ທະນາຄານດັ່ງລຸ່ມນີ້:

ສໍານັກງານໃຫຍ່ຂອງທະນາຄານ ຕັ້ງຢູ່ເລກທີ 01, ຖະໜົນປາງຄໍາ, ບ້ານຊຽງຍືນ, ເມືອງຈັນທະບູລີ, ນະຄອນຫຼວງວຽງຈັນ. ໃນວັນທີ 30 ມິຖຸນາ 2021, ທະນາຄານມີໜຶ່ງ (1) ສໍານັກງານໃຫຍ່, ຫົກ (6) ວິສາຫະກິດຂາຮຸ້ນ ແລະ ວິສາຫະກິດປະສົມ, ຊາວ (20) ສາຂາຫຼັກ, ເກົ້າສິບເກົ້າ (99) ໜ່ວຍບໍລິການ ແລະ ສິບຫ້າ (15) ຫ້ອງແລກປ່ຽນເງິນຕາທົ່ວ ສປປ ລາວ.

ກິດຈະກໍາຫຼັກຂອງທະນາຄານ ເພື່ອສະໜອງການບໍລິການດ້ານທະນາຄານປະກອບມີ:

- ການລະດົມທຶນ ແລະ ຮັບເງິນຝາກຈາກ ອົງກອນ ແລະ ບຸກຄົນ
- ປ່ອຍເງິນໃຫ້ກູ້ຢືມແກ່ ອົງກອນ ແລະ ບຸກຄົນ
- ບໍລິການແລກປ່ຽນເງິນຕາຕ່າງປະເທດ
- ການບໍລິການການຄ້າລະຫວ່າງປະເທດ
- ສ່ວນຫຼຸດຂອງເອກະສານທາງດ້ານການຄ້າ
- ພັນທະບັດ ແລະ ເອກະສານທີ່ມີມູນຄ່າອື່ນໆ

ໂຄງສ້າງການຖືຮຸ້ນຂອງທະນາຄານ ໃນວັນທີ 30 ມິຖຸນາ 2021 ມີດັ່ງລຸ່ມນີ້:

| **ຜູ້ຖືຮຸ້ນ** | **ຈໍານວນຮຸ້ນ** | **%** |
|---|---:|---:|
| ລັດຖະບານ | 124.634.021 | 60 |
| ຄູ່ຮ່ວມຮຸ້ນທາງຍຸດທະສາດ | 20.772.359 | 10 |
| ນັກລົງທຶນພາຍໃນ (ລວມທັງພະນັກງານຂອງທະນາຄານ) ແລະ ນັກລົງທຶນຕ່າງປະເທດ | 62.316.920 | 30 |
| | **207.723.300** | **100** |

ເອກະສານລາຍງານການເງິນກາງປີ ແມ່ນຖືກນໍາສະເໜີ ເປັນສະກຸນເງິນກີບ ແລະ ປັດໃຫ້ເປັນເລກຖ້ວນ, ເວັ້ນເສຍແຕ່ໄດ້ລະບຸໄວ້ ເປັນຢ່າງອື່ນ.

ເອກະສານລາຍງານການເງິນກາງປີ ສະບັບນີ້ໄດ້ຮັບການຮັບຮອງຈາກ ສະພາຜູ້ບໍລິຫານ ໃນວັນທີ: 30 ສິງຫາ 2021

## 2. ເຫດການສຳຄັນຕ່າງໆທີ່ເກີດຂຶ້ນໃນໄລຍະ

ອີງຕາມຄຳສັ່ງ ນາຍົກລັດຖະມົນຕີ ເລກທີ່ 15/ນຍ ລົງວັນທີ 21 ເມສາ 2021 ໄດ້ມີການລັອກເມືອງຂອງນະຄອນຫຼວງວຽງຈັນ ແລະ ແຂວງອື່ນໆ. ຄຳສັ່ງສະບັບໃໝ່ນີ້ໄດ້ມີຜົນບັງຄັບໃຊ້ຕັ້ງແຕ່ວັນທີ 22 ເມສາ 2021 ເຖິງວັນທີ 5 ພຶດສະພາ 2021 ແລະ ໄດ້ມີການຂະຫຍາຍໄລຍະເວລາຂອງການລັອກເມືອງໄປຈົນເຖິງວັນທີ 02 ກັນຍາ 2021.

ທະນາຄານແຫ່ງ ສປປ ລາວໄດ້ປະກາດນະໂຍບາຍເພື່ອແກ້ໄຂຜົນກະທົບຈາກການລະບາດຂອງພະຍາດໂຄວິດ-19 ເຊັ່ນວ່າໄດ້ຍົກເວັ້ນການປະຕິບັດຕາມກົດລະບຽບສະບັບເລກທີ: 512/ທຫລ ສຳ ລັບທະນາຄານທຸລະກິດ ແລະ ສະຖາບັນການເງິນ, ລົງວັນທີ 29 ມິຖຸນາ 2018. ນີ້ໝາຍຄວາມວ່າຫຼັງຈາກປັບປຸງໂຄງສ້າງຂອງໃຫ້ກູ້ແລ້ວ, ທາງທະນະຄານສາມາດຈັດປະເພດລູກຄ້າເຫຼົ່ານີ້ເປັນກຸ່ມຕາມແບບເດີມກ່ອນປັບປຸງໂຄງສ້າງໃໝ່. ການຍົກເວັ້ນດັ່ງກ່າວຍັງອະນຸຍາດໃຫ້ທະນາຄານທຸລະກິດປັບໂຄງສ້າງເງິນກູ້ທີ່ຖືກຈັດປະເພດ 'ເປັນເງິນກູ້ທີ່ບໍ່ເກີດເປັນລາຍໄດ້' ຫຼາຍກວ່າສອງຄັ້ງ ແລະ ປ່ອຍເງິນກູ້ໃຫ້ແກ່ລູກຄ້າທີ່ໄດ້ຮັບຜົນກະທົບຈາກພະຍາດ COVID-19.

ແນວທາງຂອງການຮັບມື, ທະນາຄານໄດ້ ສືບຕໍ່ປະຕິບັດນຳໃຊ້ຕາມແຈ້ງການຂອງທະນາຄານແຫ່ງ ສປປ ລາວ ເຊັ່ນ: ການປັບໂຄງສ້າງເງິນກູ້ ແລະ ການຕິດຕາມຢ່າງໃກ້ຊິດກັບລູກຄ້າທີ່ໄດ້ຮັບຜົນກະທົບຈາກ COVID-19 ເຊິ່ງອາດຈະມີຜົນກະທົບຕໍ່ກັບຄັງເງິນກູ້ຂອງທະນະຄານ.

## 3. ພື້ນຖານການບັນຊີ

ເອກະສານລາຍງານການເງິນກາງປີ ໄດ້ຖືກສ້າງຂຶ້ນເພື່ອໃຫ້ສອດຄ່ອງກັບນະໂຍບາຍການບັນຊີຂອງທະນາຄານ ຕາມທີ່ໄດ້ກຳນົດໄວ້ໃນເອກະສານລາຍງານການເງິນປະຈຳປີ ສຳລັບປີສິ້ນສຸດວັນທີ 31 ທັນວາ 2020. ເອກະສານລາຍງານການເງິນເບື້ອງຕົ້ນນີ້ (ໃບລາຍງານຖານະການເງິນ, ໃບລາຍງານຜົນໄດ້ຮັບ, ໃບລາຍງານຜົນໄດ້ຮັບສັງລວມ, ໃບລາຍງານກະແສເງິນສົດ ແລະ ໃບລາຍງານສ່ວນປ່ຽນແປງທຶນ) ແມ່ນໄດ້ນຳສະເໜີໃນຮູບແບບທີ່ສອດຄ່ອງກັບເອກະສານລາຍງານການເງິນປະຈຳໂດຍປະຕິບັດຕາມ ກົດລະບຽບການລາຍງານ ແລະ ການເປີດເຜີຍທີ່ອອກໂດຍ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ (LSCO).

ເອກະສານລາຍງານການເງິນກາງປີ ຄວນຈະອ່ານຄວບຄູ່ກັບເອກະສານລາຍງານການເງິນປະຈຳປີ ສຳລັບປີສິ້ນສຸດວັນທີ 31 ທັນວາ 2020.

ໃນການກະກຽມເອກະສານລາຍງານການເງິນນັ້ນ ຮຽກຮ້ອງໃຫ້ຜູ້ບໍລິຫານຕ້ອງໃຊ້ດຸນພິນິດໃນການຄາດຄະເນ ແລະ ຕັ້ງຂໍ້ສົມມຸດຖານທີ່ມີຜົນກະທົບຕໍ່ຊັບສິນ ແລະ ໜີ້ສິນທີ່ຖືກລາຍງານ, ການເປີດເຜີຍຊັບສິນ ແລະ ໜີ້ສິນທີ່ອາດເກີດຂຶ້ນໃນວັນທີຂອງເອກະສານການເງິນ ແລະ ລາຍຮັບ ແລະ ລາຍຈ່າຍໃນໄລຍະຂອງການລາຍງານ. ເຖິງແມ່ນວ່າການຄາດຄະເນເຫຼົ່ານີ້ແມ່ນອີງໃສ່ຄວາມຮູ້ທີ່ດີທີ່ສຸດຂອງຜູ້ບໍລິຫານກ່ຽວກັບເຫດການ ແລະ ການປະຕິບັດໃນປະຈຸບັນກໍ່ຕາມ, ແຕ່ຜົນໄດ້ຮັບຕົວຈິງອາດຈະແຕກຕ່າງຈາກການປະມາດຄະເນເຫຼົ່ານີ້.

## 4. ນະໂຍບາຍການບັນຊີ

ນະໂຍບາຍບັນຊີທີ່ນຳໃຊ້ໃນການກະກຽມເອກະສານລາຍງານການເງິນກາງປີແມ່ນສອດຄ່ອງກັບຂໍ້ມູນທີ່ນຳໃຊ້ເຂົ້າໃນເອກະສານລາຍງານການເງິນປະຈຳປີ ສຳລັບປີທີ່ສິ້ນສຸດວັນທີ 31 ທັນວາ 2020.

## 5. ລາຍຮັບສຸດທິຈາກດອກເບ້ຍ

| | ທົບທວນຄືນ<br>30 ມິຖຸນາ 2021<br>ລ້ານກີບ | ທົບທວນຄືນ<br>30 ມິຖຸນາ 2020<br>ລ້ານກີບ |
|---|---|---|
| **ລາຍຮັບດອກເບ້ຍ:** | | |
| ການໃຫ້ກູ້ຢືມ | 1.171.575 | 1.094.132 |
| ເງິນຝາກຢູ່ທະນາຄານອື່ນ | 26.572 | 27.374 |
| ການລົງທຶນທາງການເງິນ - ປະເພດຖືໄວ້ຈົນຄົບກໍານົດ | 98.353 | 81.330 |
| ລາຍຮັບດອກເບ້ຍ ແລະ ລາຍຮັບທີ່ຄ້າຍຄືກັນອື່ນໆ | 39 | 26 |
| | **1.296.539** | **1.202.862** |
| **ລາຍຈ່າຍດອກເບ້ຍ:** | | |
| ເງິນຝາກຂອງທະນາຄານອື່ນ | (100.005) | (106.584) |
| ເງິນຝາກຂອງລູກຄ້າ | (624.545) | (528.821) |
| | **(724.550)** | **(635.405)** |
| **ລາຍຮັບສຸດທິຈາກດອກເບ້ຍ** | **571.989** | **567.457** |

## 6. ລາຍຮັບສຸດທິຈາກຄ່າທໍານຽມ ແລະ ຄ່າບໍລິການ

| | ທົບທວນຄືນ<br>30 ມິຖຸນາ 2021<br>ລ້ານກີບ | ທົບທວນຄືນ<br>30 ມິຖຸນາ 2020<br>ລ້ານກີບ |
|---|---|---|
| **ລາຍຮັບຄ່າທໍານຽມ ແລະ ຄ່າບໍລິການຈາກ:** | | |
| ບໍລິການຊໍາລະສະສາງ | 113.990 | 96.414 |
| ທຸລະກໍາທາງດ້ານສິນເຊື່ອ | 2.932 | 13.904 |
| ທຸລະກໍາທາງອື່ນໆ | 21.981 | 14.440 |
| | **138.903** | **124.758** |
| **ລາຍຈ່າຍຄ່າທໍານຽມ ແລະ ຄ່າບໍລິການສໍາລັບ:** | | |
| ບໍລິການຊໍາລະສະສາງ | (14.380) | (12.033) |
| ທຸລະກໍາທາງອື່ນໆ | (2.075) | (1.700) |
| | **(16.455)** | **(13.733)** |
| **ລາຍຮັບສຸດທິຈາກຄ່າທໍານຽມ ແລະ ຄ່າບໍລິການ** | **122.448** | **111.025** |

## 7. ລາຍຈ່າຍອື່ນໆຈາກການດໍາເນີນງານ

| | ທົບທວນຄືນ<br>30 ມິຖຸນາ 2021<br>ລ້ານກີບ | ທົບທວນຄືນ<br>30 ມິຖຸນາ 2020<br>ລ້ານກີບ |
|---|---|---|
| ຄ່າເບ້ຍປະກັນໃຫ້ກອງທຶນປົກປ້ອງຜູ້ຝາກເງິນ | 22.668 | 22.897 |
| ຄ່າສ້ອມແປງ ແລະ ຄ່າບໍາລຸງຮັກສາ | 12.511 | 9.324 |
| ອຸປະກອນ ແລະ ເຄື່ອງໃຊ້ຫ້ອງການ | 9.885 | 8.313 |
| ຂາດທຶນຈາກສະສາງຊັບສິນຄົງທີ່ | 4.683 | 21 |
| ຄ່າປະກັນໄພ | 4.607 | 4.487 |
| ຄ່າໂທລະຄົມມະນາຄົມ | 4.373 | 4.291 |
| ສາທາລະນຸປະໂພກ | 4.343 | 4.361 |
| ອື່ນໆ | 25.681 | 23.665 |
| | **88.751** | **77.359** |

## 8. ກໍາໄລຕໍ່ຮຸ້ນ

ການຄິດໄລ່ກໍາໄລພື້ນຖານຕໍ່ຮຸ້ນໃນວັນທີ 30 ມິຖຸນາ 2021 ແລະ 2020 ແມ່ນອີງໃສ່ ກໍາໄລທີ່ເປັນສ່ວນຂອງຜູ້ຖືຮຸ້ນສາມັນຂອງທະນາຄານໃນໄລຍະ ແລະ ຈໍານວນສະເລ່ຍຂອງຮຸ້ນສາມັນທີ່ຍັງເຫຼືອພາຍໃນໄລຍະດັ່ງຕໍ່ໄປນີ້:

| | ທົບທວນຄືນ<br>30 ມິຖຸນາ 2021 | ທົບທວນຄືນ<br>30 ມິຖຸນາ 2020 |
|---|---|---|
| ກໍາໄລ ສ່ວນຂອງຜູ້ຖືຮຸ້ນສາມັນຂອງບໍລິສັດ (ລ້ານກີບ) | 37.300 | 44.741 |
| ຈໍານວນສະເລ່ຍຂອງຮຸ້ນສາມັນສໍາລັບກໍາໄລພື້ນຖານຕໍ່ຮຸ້ນ (ຮຸ້ນ) | 207.723.300 | 207.723.300 |
| ກໍາໄລຕໍ່ຮຸ້ນ (ກີບ) | 180 | 215 |

ກໍາໄລຈາກການດໍາເນີນງານສຸດທິ ສໍາລັບໄລຍະເວລາສິ້ນສຸດ 30 ມິຖຸນາ 2021 ແມ່ນ 24.425 ລ້ານກີບ ເຮັດໃຫ້ມີກໍາໄລພື້ນຖານຕໍ່ຮຸ້ນ 118 ກີບ ຕໍ່ຮຸ້ນ ແລະ ກໍາໄລຈາກການດໍາເນີນງານສຸດທິ ສໍາລັບໄລຍະເວລາສິ້ນສຸດ 30 ມິຖຸນາ 2020 ແມ່ນ 32.435 ລ້ານກີບ ເຮັດໃຫ້ມີກໍາໄລພື້ນຖານຕໍ່ຮຸ້ນ 156 ກີບ ຕໍ່ຮຸ້ນ

## 9. ເງິນຝາກຢູ່ທະນາຄານອື່ນ

| | ທົບທວນຄືນ<br>30 ມິຖຸນາ 2021<br>ລ້ານກີບ | ກວດສອບ<br>31 ທັນວາ 2020<br>ລ້ານກີບ |
|---|---|---|
| **ເງິນຝາກກະແສລາຍວັນ ແລະ ເງິນຝາກປະຢັດ** | **3.781.459** | **3.595.399** |
| - ເປັນເງິນກີບ | 80 | 26.045 |
| - ເປັນເງິນຕາຕ່າງປະເທດ | 3.781.379 | 3.569.354 |
| **ເງິນຝາກມີກໍານົດ** | **1.609.312** | **759.326** |
| - ເປັນເງິນກີບ | 347.890 | 82.890 |
| - ເປັນເງິນຕາຕ່າງປະເທດ | 1.261.422 | 676.436 |
| **ດອກເບ້ຍຄ້າງຮັບ** | **3.798** | **670** |
| | **5.394.569** | **4.355.395** |

## 9. ເງິນຝາກຢູ່ທະນາຄານອື່ນ (ຕໍ່)

ອັດຕາດອກເບ້ຍສໍາລັບເງິນຝາກຢູ່ທະນາຄານອື່ນພາຍໃນໄລຍະມີດັ່ງນີ້ :

| | **30 ມິຖຸນາ 2021**<br>**% ຕໍ່ປີ** | **31 ທັນວາ 2020**<br>**% ຕໍ່ປີ** |
|---|---|---|
| ເງິນຝາກກະແສລາຍວັນ | 0,00 - 3,10 | 0,00 - 3,10 |
| ເງິນຝາກປະຢັດ | 0,00 - 0,80 | 0,00 - 0,80 |
| ເງິນຝາກມີກໍານົດ | 0,02 - 5,70 | 0,14 - 3,50 |

## 10. ເງິນກູ້ໃຫ້ແກ່ລູກຄ້າ

| | **ທົບທວນຄືນ**<br>**30 ມິຖຸນາ 2021**<br>**ລ້ານກີບ** | **ກວດສອບ**<br>**31 ທັນວາ 2020**<br>**ລ້ານກີບ** |
|---|---|---|
| ເງິນກູ້ໃຫ້ແກ່ລູກຄ້າທັງໝົດ | 29.438.167 | 29.152.520 |
| ຫັກ: ເງິນແຮຂາດທຶນຈາກການເສື່ອມຄ່າ | (1.321.734) | (1.073.649) |
| ດອກເບ້ຍຄ້າງຮັບ | 3.396.258 | 2.683.546 |
| | **31.512.691** | **30.762.417** |

ສ່ວນປ່ຽນແປງໃນເງິນແຮສໍາລັບການຂາດທຶນຈາກການເສື່ອມຄ່າຂອງເງິນກູ້ໃຫ້ແກ່ລູກຄ້າ ພາຍໃນຫົກເດືອນຕົ້ນປີສິ້ນສຸດວັນທີ 30 ມິຖຸນາ 2021 ມີດັ່ງລຸ່ມນີ້:

| | **ລ້ານກີບ** |
|---|---|
| **ຍອດເຫຼືອ ໃນວັນທີ 1 ມັງກອນ 2021 - ກວດສອບ** | **1.073.649** |
| ປ່ຽນແປງສຸດທິພາຍໃນໄລຍະ | 394.336 |
| ສະສາງໜີ້ຕ້ອງຮັບທວງຍາກ | (157.210) |
| ຜົນຕ່າງຈາກອັດຕາແລກປ່ຽນ | 10.959 |
| **ຍອດເຫຼືອ ໃນວັນທີ 30 ມິຖຸນາ 2021 - ທົບທວນຄືນ** | **1.321.734** |

ລາຍລະອຽດເງິນແຮສໍາລັບການເສື່ອມຄ່າຂອງເງິນກູ້ໃຫ້ແກ່ລູກຄ້າ ໃນວັນທີ 30 ມິຖຸນາ 2021 ມີດັ່ງລຸ່ມນີ້:

| | **30 ມິຖຸນາ 2021** | | **31 ທັນວາ 2020** | |
|---|---|---|---|---|
| | **ຍອດເຫຼືອທ້າຍ**<br>**ລ້ານກີບ** | **ຄ່າເສື່ອມ**<br>**ລ້ານກີບ** | **ຍອດເຫຼືອທ້າຍ**<br>**ລ້ານກີບ** | **ຄ່າເສື່ອມ**<br>**ລ້ານກີບ** |
| ຄ່າເສື່ອມຈາກການປະເມີນເງິນກູ້ແບບດ່ຽວ | 4.633.009 | 1.124.671 | 3.791.761 | 891.521 |
| ຄ່າເສື່ອມຈາກການປະເມີນເງິນກູ້ແບບກຸ່ມ | 24.805.158 | 197.063 | 25.360.759 | 182.128 |
| | **29.438.167** | **1.321.734** | **29.152.520** | **1.073.649** |

## 10. ເງິນກູ້ໃຫ້ແກ່ລູກຄ້າ (ຕໍ່)

ອັດຕາດອກເບ້ຍສຳລັບເງິນກູ້ທຸລະກິດພາຍໃນໄລຍະ ມີດັ່ງລຸ່ມນີ້:

| | 30 ມິຖຸນາ 2021<br>% ຕໍ່ປີ | 31 ທັນວາ 2020<br>% ຕໍ່ປີ |
|---|---|---|
| ເງິນກູ້ເປັນເງິນ ກີບ | 5,50 - 16,00 | 5,50 - 16,00 |
| ເງິນກູ້ເປັນເງິນ ໂດລາ | 4,25 - 16,00 | 4,25 - 16,00 |
| ເງິນກູ້ເປັນເງິນ ບາດ | 6,00 - 10,00 | 6,00 - 10,00 |

*ເງິນກູ້ແບ່ງຕາມສະກຸນເງິນ:*

| | ທົບທວນຄືນ<br>30 ມິຖຸນາ 2021<br>ລ້ານກີບ | ກວດສອບ<br>31 ທັນວາ 2020<br>ລ້ານກີບ |
|---|---|---|
| ເງິນກູ້ເປັນເງິນ ກີບ | 12.738.923 | 12.717.791 |
| ເງິນກູ້ເປັນເງິນ ໂດລາ | 13.143.686 | 12.841.292 |
| ເງິນກູ້ເປັນເງິນ ບາດ | 3.555.558 | 3.593.437 |
| | **29.438.167** | **29.152.520** |

*ເງິນກູ້ແບ່ງຕາມມື້ຄົບກຳນົດເດີມ:*

| | ທົບທວນຄືນ<br>30 ມິຖຸນາ 2021<br>ລ້ານກີບ | ກວດສອບ<br>31 ທັນວາ 2020<br>ລ້ານກີບ |
|---|---|---|
| ເງິນກູ້ໄລຍະສັ້ນ | 2.807.067 | 2.541.425 |
| ເງິນກູ້ໄລຍະກາງ | 16.598.794 | 16.009.856 |
| ເງິນກູ້ໄລຍະຍາວ | 10.032.306 | 10.601.239 |
| | **29.438.167** | **29.152.520** |

## 11. ການລົງທຶນທາງການເງິນ - ປະເພດມີໄວ້ເພື່ອຂາຍ

ທະນາຄານ ມີການລົງທຶນໃນຮຸ້ນຂອງບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ ແມ່ນບໍລິສັດທີ່ຈົດທະບຽນໃນຕະຫລາດຫຼັກຊັບລາວ ແລະ ໃນວັນທີ 30 ມິຖຸນາ 2021, ຮຸ້ນມີມູນຄ່າຍຸຕິທຳ ແມ່ນ 85.521 ລ້ານກີບ.

## 12. ການລົງທຶນທາງການເງິນ - ປະເພດຖືໄວ້ຈົນເຖິງວັນຄົບກຳນົດ

ການປ່ຽນແປງທີ່ມີສາລະສຳຄັນ ຂອງການລົງທຶນປະເພດຖືໄວ້ຈົນຄົບກຳນົດ ມີລາຍລະອຽດດັ່ງລຸ່ມນີ້

| | ລ້ານກີບ |
|---|---|
| **ຍອດເຫຼືອ ໃນວັນທີ 1 ມັງກອນ 2021 - ກວດສອບ** | **3.899.011** |
| ເພີ່ມຂຶ້ນ | 506.622 |
| ວິທີຫຼຸດຕົ້ນທຶນທີ່ເກີດຂຶ້ນໃນໄລຍະ | (56.650) |
| ໄດ້ຮັບ | (67.789) |
| **ຍອດເຫຼືອ ໃນວັນທີ 30 ມິຖຸນາ 2021 - ທົບທວນຄືນ** | **4.281.194** |

## 13. ການລົງທຶນໃນວິສາຫະກິດຂາຮຸ້ນ ແລະ ວິສາຫະກິດປະສົມ

ການປ່ຽນແປງທີ່ມີສາລະສຳຄັນ ຂອງເງິນລົງທຶນໃນວິສາຫະກິດຂາຮຸ້ນ ແລະ ວິສາຫະກິດປະສົມມີລາຍລະອຽດດັ່ງລຸ່ມນີ້

| | ລ້ານກີບ |
|---|---|
| **ຍອດເຫຼືອ ໃນວັນທີ 1 ມັງກອນ 2021 - ກວດສອບ** | **614.434** |
| ສ່ວນແບ່ງກຳໄລ(ຂາດທຶນ)ໃນວິສາຫະກິດຂາຮຸ້ນ ແລະ ວິສາຫະກິດປະສົມ | 12.875 |
| ລົງທຶນເພີ່ມໃນວິສາຫະກິດຂາຮຸ້ນ ແລະ ວິສາຫະກິດປະສົມ* | 1.360 |
| *ຫັກ:* ເງິນປັນຜົນໄດ້ຮັບໃນໄລຍະ | (1.365) |
| **ຍອດເຫຼືອ ໃນວັນທີ 30 ມິຖຸນາ 2021 - ທົບທວນຄືນ** | **627.304** |

* ທະນາຄານມີການຈ່າຍເງິນລົງທຶນເພີ່ມໃນບໍລິສັດ ລາວເນີເຊີນບໍ ເພເມັ້ນ ເນັດເວີກ ຈຳກັດມູນຄ່າເທົ່າກັບ 1.360 ລ້ານກີບ

ເງິນລົງທຶນໃນວິສາຫະກິດຂາຮຸ້ນ ແລະ ວິສາຫະກິດປະສົມໃນວັນທີ 30 ມິຖຸນາ 2021, ມີດັ່ງນີ້:

| | **ອັດຕາສ່ວນການລົງທຶນ** | | **ມູນຄ່າຕົ້ນທຶນ** | | **ເງິນລົງທຶນວິທີສ່ວນໄດ້ເສຍ** | |
|---|---|---|---|---|---|---|
| | **30 ມິຖຸນາ 2021** | **31 ທັນວາ 2020** | **ທົບທວນຄືນ 30 ມິຖຸນາ 2021** | **ກວດສອບ 31 ທັນວາ 2020** | **ທົບທວນຄືນ 30 ມິຖຸນາ 2021** | **ກວດສອບ 31 ທັນວາ 2020** |
| | ***(%)*** | | **ລ້ານກີບ** | | | |
| ບໍລິສັດຫຼັກຊັບ ທຄຕລ-ກທ ຈຳກັດ | 70 | 70 | 70.000 | 70.000 | 73.904 | 73.586 |
| ທະນາຄານຮ່ວມທຸລະກິດລາວ - ຫວຽດ | 25 | 25 | 197.839 | 197.839 | 253.279 | 246.894 |
| ທະນາຄານ ລາວ-ຝຣັ່ງ ຈຳກັດ | 30 | 30 | 114.000 | 114.000 | 115.203 | 111.925 |
| ທະນາຄານ ລາວ-ຈີນ ຈຳກັດ | 49 | 49 | 147.000 | 147.000 | 167.573 | 166.964 |
| ບໍລິສັດ ປະກັນໄພລາວ-ຫວຽດ | 35 | 35 | 9.168 | 9.168 | 13.051 | 12.093 |
| ບໍລິສັດ ລາວເນີເຊີນບໍ ເພເມັ້ນ ເນັດເວີກ ຈຳກັດ | 20 | 20 | 4.760 | 3.400 | 4.294 | 2.972 |
| **ລວມ** | | | **542.767** | **541.407** | **627.304** | **614.434** |

## 14. ຊັບສົມບັດຄົງທີ່ ແລະ ອຸປະກອນ

ການເຄື່ອນໄຫວ ຂອງຊັບສົມບັດຄົງທີ່ ແລະ ອຸປະກອນ ສໍາລັບໄລຍະ ມີດັ່ງຕໍ່ໄປນີ້:

| | ລ້ານກີບ |
|---|---|
| **ຍອດເຫຼືອ ໃນວັນທີ 1 ມັງກອນ 2021 - ກວດສອບ** | **601.572** |
| ເພີ່ມຂຶ້ນ* | 55.975 |
| ສະສາງ /ຂາຍ, ສຸດທິ | (5.001) |
| ຄ່າຫຼຸ້ຍຫ້ຽນ | (39.339) |
| **ຍອດເຫຼືອ ໃນວັນທີ 30 ມິຖຸນາ 2021- ທົບທວນຄືນ** | **613.207** |

* ໃນໄລຍະນີ້, ການເພີ່ມຂຶ້ນສ່ວນຫຼາຍຂອງຊັບສົມບັດຄົງທີ່ ແລະ ອຸປະກອນ ແມ່ນຄື ເຊີເວີ, ອຸປະກອນສໍາລັບໄອທີ ແລະ ເຄື່ອງຈັກນັບເງິນ ເປັນຕົ້ນ.

## 15. ຊັບສົມບັດຄົງທີ່ບໍ່ມີຕົວຕົນ

ການເຄື່ອນໄຫວ ຂອງຊັບສົມບັດຄົງທີ່ບໍ່ມີຕົວຕົນ ສໍາລັບໄລຍະ ມີດັ່ງຕໍ່ໄປນີ້:

| | ລ້ານກີບ |
|---|---|
| **ຍອດເຫຼືອ ໃນວັນທີ 1 ມັງກອນ 2021 - ກວດສອບ** | **245.873** |
| ເພີ່ມຂຶ້ນ | 3.471 |
| ຄ່າຫຼຸ້ຍຫ້ຽນ | (1.202) |
| **ຍອດເຫຼືອ ໃນວັນທີ 30 ມິຖຸນາ 2021 - ທົບທວນຄືນ** | **248.142** |

## 16. ໜີ້ຕ້ອງສົ່ງທະນາຄານ ແລະ ສະຖາບັນການເງິນອື່ນໆ

| | ທົບທວນຄືນ<br>30 ມິຖຸນາ 2021<br>ລ້ານກີບ | ກວດສອບ<br>31 ທັນວາ 2020<br>ລ້ານກີບ |
|---|---|---|
| **ເງິນຝາກກະແສລາຍວັນ** | **3.460.722** | **2.626.472** |
| - ເປັນເງິນກີບ | 1.553.362 | 961.938 |
| - ເປັນເງິນຕາຕ່າງປະເທດ | 1.907.360 | 1.664.534 |
| **ເງິນຝາກປະຢັດ** | **122.904** | **113.582** |
| - ເປັນເງິນກີບ | 74.649 | 70.786 |
| - ເປັນເງິນຕາຕ່າງປະເທດ | 48.255 | 42.796 |
| **ເງິນຝາກມີກໍານົດ** | **632.450** | **707.545** |
| - ເປັນເງິນກີບ | 269.370 | 323.910 |
| - ເປັນເງິນຕາຕ່າງປະເທດ | 363.080 | 383.635 |
| **ອື່ນໆ** | **11.168** | **17.141** |
| - ເປັນເງິນກີບ | 10.864 | 17.133 |
| - ເປັນເງິນຕາຕ່າງປະເທດ | 304 | 8 |
| **ດອກເບ້ຍຄ້າງຈ່າຍ** | **8.992** | **18.060** |
| | **4.236.236** | **3.482.800** |

## 16. ໜີ້ຕ້ອງສົ່ງທະນາຄານ ແລະ ສະຖາບັນການເງິນອື່ນໆ (ຕໍ່)

ອັດຕາດອກເບ້ຍສໍາລັບເງິນຝາກໃຫ້ທະນາຄານ ແລະ ສະຖາບັນການເງິນອື່ນໃນໄລຍະມີດັ່ງລຸ່ມນີ້:

| | 30 ມິຖຸນາ 2021<br>% ຕໍ່ປີ | 31 ທັນວາ 2020<br>% ຕໍ່ປີ |
|---|---|---|
| ເງິນຝາກກະແສລາຍວັນ | 0,00 - 0,30 | 0,00 - 0,30 |
| ເງິນຝາກປະຢັດ | ບໍ່ມີດອກເບ້ຍ | ບໍ່ມີດອກເບ້ຍ |
| ເງິນຝາກມີກໍານົດ | 0,56 - 6,65 | 0,56 - 6,65 |

## 17. ໜີ້ຕ້ອງສົ່ງໃຫ້ລູກຄ້າ

| | ທົບທວນຄືນ<br>30 ມິຖຸນາ 2021<br>ລ້ານກີບ | ກວດສອບ<br>31 ທັນວາ 2020<br>ລ້ານກີບ |
|---|---|---|
| **ເງິນຝາກກະແສລາຍວັນ** | **6.803.291** | **6.630.559** |
| ເງິນຝາກກະແສລາຍວັນເປັນເງິນກີບ | 3.468.897 | 3.102.811 |
| ເງິນຝາກກະແສລາຍວັນເປັນເງິນຕາຕ່າງປະເທດ | 3.334.394 | 3.527.748 |
| **ເງິນຝາກປະຢັດ** | **24.189.053** | **21.324.874** |
| ເງິນຝາກປະຢັດເປັນເງິນກີບ | 12.156.464 | 10.326.176 |
| ເງິນຝາກປະຢັດເປັນເງິນຕາຕ່າງປະເທດ | 12.032.589 | 10.998.698 |
| **ເງິນຝາກມີກໍານົດ** | **18.139.748** | **16.508.548** |
| ເງິນຝາກມີກໍານົດເປັນເງິນກີບ | 9.052.184 | 8.522.980 |
| ເງິນຝາກມີກໍານົດເປັນເງິນຕາຕ່າງປະເທດ | 9.087.564 | 7.985.568 |
| **ເງິນຝາກມັດຈໍາ** | **90.895** | **64.704** |
| ເງິນຝາກມັດຈໍາເປັນເງິນກີບ | 29.998 | 25.731 |
| ເງິນຝາກມັດຈໍາເປັນເງິນຕາຕ່າງປະເທດ | 60.897 | 38.973 |
| **ໜີ້ຕ້ອງສົ່ງລູກຄ້າອື່ນໆ** | **156.869** | **122.433** |
| **ດອກເບ້ຍຄ້າງຈ່າຍ** | **439.928** | **392.377** |
| | **49.819.784** | **45.043.495** |

ເງິນຝາກປະຢັດຂອງລູກຄ້າ ລວມມີເປັນສະກຸນເງິນກີບ, ໂດລາ ແລະ ບາດ ເຊິ່ງມີອັດຕາດອກເບ້ຍ ຕັ້ງແຕ່ 1,25% – 1,75%, 0,90% - 1,15% ແລະ 0,45% – 0,70% ຕໍ່ປີ ຕາມລໍາດັບ.

ເງິນຝາກມີກໍານົດ ເປັນສະກຸນເງິນກີບ, ໂດລາ, ບາດ ມີກໍານົດຕັ້ງແຕ່ 3, 6, 12 ເດືອນ ແລະ ຫຼາຍກວ່າ 1 ປີ ເຊິ່ງມີອັດຕາດອກເບ້ຍ ຕັ້ງແຕ່ 3,16% – 12,50%, 1,65% - 7,75% ແລະ 1,40% – 7,75% ຕໍ່ປີ ຕາມລໍາດັບ.

## 18. ເງິນກູ້ຢືມຈາກທະນາຄານອື່ນ

ການເຄື່ອນໄຫວຂອງເງິນກູ້ຢືມໄລຍະຍາວ ໃນວັນທີ 30 ມິຖຸນາ 2021 ມີດັ່ງລຸ່ມນີ້:

| | ລ້ານກີບ |
|---|---|
| **ຍອດເຫຼືອ ໃນວັນທີ 1 ມັງກອນ 2021 - ກວດສອບ** | **2.850.433** |
| ເພີ່ມຂຶ້ນ | 14.225 |
| ຈ່າຍຄືນ | (26.703) |
| ຂາດທຶນຈາກອັດຕາແລກປ່ຽນ | 58.212 |
| **ຍອດເຫຼືອ ໃນວັນທີ 30 ມິຖຸນາ 2021 - ທົບທວນຄືນ** | **2.896.167** |

| | ທົບທວນຄືນ<br>30 ມິຖຸນາ 2021<br>ລ້ານກີບ | ກວດສອບ<br>31 ທັນວາ 2020<br>ລ້ານກີບ |
|---|---|---|
| ເງິນກູ້ຢືມຈາກທະນາຄານແຫ່ງ ສປປ ລາວ | 1.911.662 | 1.885.302 |
| ເງິນກູ້ຢືມຈາກທະນາຄານອື່ນ | 984.505 | 965.131 |
| **ລວມ** | **2.896.167** | **2.850.433** |
| ດອກເບ້ຍຄ້າງຈ່າຍ | 165.276 | 111.668 |
| | **3.061.443** | **2.962.101** |

## 19. ໜີ້ຕ້ອງສົ່ງອາກອນໃນປີ

| | ທົບທວນຄືນ<br>30 ມິຖຸນາ 2021<br>ລ້ານກີບ | ກວດສອບ<br>31 ທັນວາ 2020<br>ລ້ານກີບ |
|---|---|---|
| ອາກອນກໍາໄລຄ້າງຊໍາລະ (1) | 49.286 | 23.726 |

(1) ການເຄື່ອນໄຫວຂອງອາກອນກໍາໄລຄ້າງຊໍາລະ ໃນໄລຍະ ມີດັ່ງຕໍ່ໄປນີ້:

| | ລ້ານກີບ |
|---|---|
| **ຍອດເຫຼືອ ໃນວັນທີ 1 ມັງກອນ 2021 - ກວດສອບ** | **23.726** |
| ລາຍຈ່າຍອາກອນກໍາໄລໃນໄລຍະ (2) | 42.277 |
| ຈ່າຍຊໍາລະໃນໄລຍະ | (16.717) |
| **ຍອດເຫຼືອ ໃນວັນທີ 30 ມິຖຸນາ 2021 - ທົບທວນຄືນ** | **49.286** |

(2) ລາຍຈ່າຍອາກອນກໍາໄລ ສໍາລັບໄລຍະຫົກເດືອນ ສິ້ນສຸດວັນທີ 30 ມິຖຸນາ 2021 ແລະ 30 ມິຖຸນາ 2020 ມີດັ່ງນີ້:

| | ທົບທວນຄືນ<br>30 ມິຖຸນາ 2021<br>ລ້ານກີບ | ທົບທວນຄືນ<br>30 ມິຖຸນາ 2020<br>ລ້ານກີບ |
|---|---|---|
| ອາກອນກໍາໄລໄລຍະປັດຈຸບັນ | 42.277 | 12.614 |
| ອາກອນກໍາໄລລໍຖ້າຊໍາລະສະສາງ | - | 17.191 |
| | **42.277** | **29.805** |

## 20. ທຶນຈົດທະບຽນ

ທຶນຈົດທະບຽນບໍ່ໄດ້ມີການປ່ຽນແປງເກີດຂຶ້ນໃນໄລຍະນີ້ຫົກເດືອນຕົ້ນປີນີ້.

## 21. ຄັງສະສົມຕາມລະບຽບການ

| | ຄັງສະສົມຕາມ ລະບຽບການ ລ້ານກີບ | ຄັງຂະຫຍາຍ ທຸລະກິດ ແລະ ຄັງສະສົມອື່ນໆ ລ້ານກີບ | ລວມ ລ້ານກີບ |
|---|---|---|---|
| **ຍອດເຫຼືອ ໃນວັນທີ 1 ມັງກອນ 2021 - ກວດສອບ** | **205.773** | **547.626** | **753.399** |
| ແບ່ງສ່ວນເຂົ້າຄັງສະສົມສໍາລັບປີ 2020 | 22.362 | 55.904 | 78.266 |
| **ຍອດເຫຼືອ ໃນວັນທີ 30 ມິຖຸນາ 2021 - ທົບທວນຄືນ** | **228.135** | **603.530** | **831.665** |

## 22. ເງິນປັນຜົນ

ກອງປະຊຸມວິສາມັນຜູ້ຖືຮຸ້ນຈັດຂຶ້ນໃນວັນທີ 30 ເມສາ 2021, ມີມະຕິອະນຸມັດການຈ່າຍເງິນປັນຜົນສໍາລັບປີ 2020 ລວມເປັນເງິນທັງໝົດ 116 ຕື້ກີບ (ລາຄາ 560 ກີບຕໍ່ຮຸ້ນ). ເງິນປັນຜົນດັ່ງກ່າວໄດ້ຖືກຈ່າຍໃນວັນທີ 18 ພຶດສະພາ 2021.

## 23. ລາຍລະອຽດເພີ່ມຕື່ມກ່ຽວກັບກະແສເງິນສົດ

ເງິນສົດ ແລະ ລາຍການທຽບເທົ່າເງິນສົດ ທີ່ລວມຢູ່ໃນໃບລາຍງານກະແສເງິນສົດກາງປີ ປະກອບມີມູນຄ່າຂອງເອກະສານລາຍງານຖານະການເງິນກາງປີ ດັ່ງລາຍລະອຽດລຸ່ມນີ້:

| | ທົບທວນຄືນ 30 ມິຖຸນາ 2021 ລ້ານກີບ | ທົບທວນຄືນ 30 ມິຖຸນາ 2020 ລ້ານກີບ |
|---|---|---|
| ເງິນສົດ ແລະ ທຽບເທົ່າເງິນສົດໃນຄັງ | 2.757.422 | 2.260.843 |
| ເງິນຝາກກະແສລາຍວັນຢູ່ທະນາຄານແຫ່ງ ສປປ ລາວ | 12.108.670 | 7.178.268 |
| ເງິນຝາກກະແສລາຍວັນຢູ່ທະນາຄານອື່ນ | 3.781.459 | 3.111.056 |
| ເງິນຝາກມີກໍາຫນົດ ທີ່ມີກໍາຫນົດ 90 ວັນ | 1.113.628 | 193.507 |
| | **19.761.179** | **12.743.674** |

## 24. ໜີ້ສິນທີ່ອາດເກີດຂຶ້ນ ແລະ ຂໍ້ຜູກພັນ

| | 30 ມິຖຸນາ 2021<br>ລ້ານກີບ | 31 ທັນວາ 2020<br>ລ້ານກີບ |
|---|---|---|
| ວົງເງິນສິນເຊື່ອໃຫ້ແກ່ລູກຄ້າ (ii) | 2.887.984 | 3.301.678 |
| ໜັງສືຄ້ຳປະກັນທາງການເງິນ (i) | 445.000 | 481.964 |
| ໜັງສືສິນເຊື່ອກັບທີ່ | 199.351 | 175.324 |
| ໜັງສືສິນເຊື່ອລໍຖ້າຊໍາລະສະສາງ | 101.792 | 68.737 |
| ວົງເງິນສິນເຊື່ອໃຫ້ແກ່ທະນາຄານອື່ນ (ii) | 548 | 548 |
| | **3.634.675** | **4.028.250** |

### (i) ໜັງສືຄ້ຳປະກັນທາງການເງິນ

ໜັງສືສິນເຊື່ອ, ໜັງສືຄ້ຳປະກັນ (ລວມທັງໜັງສືສິນເຊື່ອເພື່ອຄ້ຳປະກັນ) ແລະ ໜັງສືໃດໜຶ່ງທີ່ເຮັດໃຫ້ທະນາຄານຕ້ອງເປັນຜູ້ຈ່າຍເງິນແທນລູກຄ້າໃນກໍລະນີທີ່ລູກຄ້າຜິດສັນຍາ, ໜັງສືຄ້ຳປະກັນ ແລະ ໜັງສືສິນເຊື່ອເພື່ອຄ້ຳປະກັນ ຖືວ່າມີຄວາມສ່ຽງຄ້າຍຄືກັບເງິນກູ້, ໜັງສືຄ້ຳປະກັນສາມາດເຮັດເປັນຮູບແບບໃນບິນແລກປ່ຽນ ຫຼື ໃນຮູບແບບໜັງສືສິນເຊື່ອບໍ່ສາມາດຖອນຄືນໄດ້, ໜັງສືຄ້ຳປະກັນເງິນລ່ວງໜ້າ ແລະ ໜັງສືຮັບຮອງໜີ້ຈາກບິນສ່ວນຫຼຸດ.

### (ii) ວົງເງິນສິນເຊື່ອໃຫ້ແກ່ລູກຄ້າແລະທະນາຄານອື່ນ

ບັນດາຂໍ້ຜູກພັນສຳລັບຕໍ່ອາຍຸສັນຍາສິນເຊື່ອແມ່ນມີໄວ້ສຳລັບເງິນກູ້ ແລະ ເງິນກູ້ໝູນວຽນ. ຂໍ້ຜູກພັນໂດຍທົ່ວໄປມີມື້ຄົບກຳນົດທີ່ໄດ້ກຳນົດໄວ້, ຫຼື ສາເຫດຂອງການຢຸດຕິສັນຍາອື່ນໆ. ດັ່ງນັ້ນ, ຂໍ້ຜູກພັນອາດຈະໝົດກຳນົດໂດຍທີ່ຍັງບໍ່ຖືກຖອນ, ມູນຄ່າໃນສັນຍາທັງໝົດບໍ່ຈຳເປັນຕ້ອງສະແດງເຖິງຄວາມຕ້ອງການເງິນສົດໃນອະນາຄົດ.

ເຖິງຢ່າງໃດກໍຕາມ, ໂອກາດຄ່າເສື່ອມໜີ້ເສຍຈະເກີດຂຶ້ນ ແມ່ນຕ່ຳກວ່າມູນຄ່າທັງໝົດ ຂອງບັນດາຂໍ້ຜູກພັນທີ່ຍັງບໍ່ໄດ້ຖືກນຳໃຊ້ ເນື່ອງຈາກວ່າ, ຂໍ້ຜູກພັນໃນການຕໍ່ອາຍຸສິນເຊື່ອ ຂຶ້ນຢູ່ກັບລູກຄ້າສາມາດຮັກສາມາດຕະຖານສະເພາະ ທີ່ໄດ້ກຳນົດໄວ້. ທະນາຄານຕິດຕາມມື້ຄົບກຳນົດຂອງຂໍ້ຜູກພັນສິນເຊື່ອ, ເພາະວ່າຂໍ້ຜູກພັນທີ່ມີອາຍຸສັນຍາໄລຍະຍາວກວ່າ ແມ່ນມີຄວາມສ່ຽງຫຼາຍກວ່າຂໍ້ຜູກພັນທີ່ມີອາຍຸສັນຍາສັ້ນ.

## 25. ການບໍລິຫານທຶນ

ທະນາຄານໄດ້ຮັກສາທຶນສຳຮອງຂັ້ນຕ່ຳຕາມລະບຽບການ ເພື່ອໃຫ້ສອດຄ່ອງຕາມຂໍ້ກຳນົດເລກທີ 536/ກຄທສ/ທຫລ, ລົງວັນທີ 14 ຕຸລາ 2009 ອອກໂດຍຮັກສາການຫົວໜ້າກົມຄຸ້ມຄອງທະນາຄານທຸລະກິດ ແລະ ສະຖາບັນການເງິນ, ທະນາຄານແຫ່ງ ສປປ ລາວ ແລະ ຄຳແນະນຳອື່ນໆ. ຈຸດປະສົງເບື້ອງຕົ້ນຂອງການບໍລິຫານທຶນຂອງທະນາຄານແມ່ນເພື່ອຮັບປະກັນວ່າທະນາຄານໄດ້ປະຕິບັດຕາມຂໍ້ກຳນົດທາງການເງິນຂອງທະນາຄານແຫ່ງ ສປປ ລາວ, ທະນາຄານຮັບຮູ້ເຖິງຄວາມຈຳເປັນຂອງທະນາຄານເພື່ອຮັກສາການບໍລິຫານຊັບສິນ ແລະ ໜີ້ສິນໃຫ້ມີປະສິດທິພາບເພື່ອສ້າງສົມດຸນລະຫວ່າງການສ້າງກຳໄລ ແລະ ຄວາມພຽງພໍຂອງທຶນ

**ອີງຕາມຂໍ້ກຳນົດເລກທີ 536/ກຄທສ/ທຫລ, ທຶນຕາມລະບຽບການຂອງທະນາຄານກາງຖືກວິເຄາະເປັນ 2 ລະດັບຄື:**

- ທຶນຊັ້ນ 1 ປະກອບດ້ວຍ: ທຶນຈົດທະບຽນ, ຄັງສະສົມຕາມລະບຽບການ, ທຶນເພື່ອການຂະຫຍາຍທຸລະກິດ ແລະ ທຶນອື່ນໆ ແລະ ກຳໄລລໍຖ້າແບ່ງປັນ;
- ທຶນຊັ້ນ 2 ແມ່ນມູນຄ່າທີ່ຕ່ຳກວ່າ 1,25% ຂອງຍອດລວມຄວາມສ່ຽງຂອງລາຍການໃນໃບລາຍງານຖານະການເງິນ ຫຼືຍອດເຫຼືອຂອງເງິນແຮທົ່ວໄປ ແລະເງິນແຮສຳລັບຄວາມສ່ຽງ ແລະ ລາຍຈ່າຍເງິນແຮພາຍໃນໄລຍະຫົກເດືອນ.

ຂອບເຂດຕ່າງໆ ແມ່ນຖືກນຳໃຊ້ເພື່ອເປັນອົງປະກອບຂອງທຶນອີງໃສ່ ທຶນຊັ້ນ 2 ບໍ່ສາມາດເກີນທຶນຊັ້ນ 1 ໄດ້ ແລະ ໜີ້ສິນສຳຮອງບໍ່ສາມາດເກີນ 50% ຂອງທຶນຊັ້ນ 1.

**ການວິເຄາະທຶນແມ່ນອີງຕາມຂໍ້ມູນທາງການເງິນທີ່ໄດ້ຈາກເອກະສານລາຍງານການເງິນກາງປີ ດັ່ງຕໍ່ໄປນີ້:**

| | 30 ມິຖຸນາ 2021<br>ລ້ານກີບ | 31 ທັນວາ 2020<br>ລ້ານກີບ |
|---|---|---|
| ທຶນຊັ້ນ 1 | 2.131.374 | 2.213.029 |
| ທຶນຊັ້ນ 2 | - | - |
| **ລວມທຶນ** | **2.131.374** | **2.213.029** |
| ຫັກອອກຈາກທຶນ (ການລົງທຶນໃນນິຕິບຸກຄົນອື່ນ) | (627.304) | (614.434) |
| **ທຶນສຳລັບການຄິດໄລ່ CAR (A)** | **1.504.070** | **1.598.595** |
| ຄວາມສ່ຽງສຳຄັນຢູ່ໃບລາຍງານຖານະການເງິນ | 16.648.361 | 16.662.140 |
| ຄວາມສ່ຽງສຳຄັນຢູ່ລາຍການນອກໃບລາຍງານຖານະການເງິນ | 1.743.463 | 1.955.930 |
| **ລວມຄວາມສ່ຽງສຳຄັນຢູ່ຊັບສິນ (B)** | **18.391.824** | **18.618.070** |
| **ອັດຕາສ່ວນຄວາມພຽງພໍຂອງທຶນ (A/B)** | **8,18%** | **8,59%** |

## 26. ບັນດາລາຍການເຄື່ອນໄຫວກັບພາກສ່ວນທີ່ກ່ຽວຂ້ອງ

ກ) ຜູ້ຖືຮຸ້ນໃຫຍ່ຂອງທະນາຄານ ແມ່ນ ລັດຖະບານລາວ ຖືຮຸ້ນ 60% ຂອງຮຸ້ນທັງໝົດຂອງທະນາຄານ. ຮຸ້ນສ່ວນທີ່ເຫຼືອຂອງທະນາຄານ ແມ່ນຖືໂດຍນັກລົງທຶນທົ່ວໄປ.

ຂໍ້ມູນຂອງທະນາຄານ ໃນສ່ວນຂອງເງິນລົງທຶນໃນວິສາຫະກິດຂາຮຸ້ນ ແລະ ວິສາຫະກິດປະສົມແມ່ນ ໄດ້ເປີດເຜີຍຢູ່ບົດອະທິບາຍຂໍ້ທີ 13.

ຂ) ລາຍການເຄື່ອນໄຫວທີ່ເປັນສາລະສໍາຄັນກັບພາກສ່ວນທີ່ກ່ຽວຂ້ອງ ໃນວັນທີ 30 ມິຖຸນາ 2021 ມີດັ່ງລຸ່ມນີ້:

| | 30 ມິຖຸນາ 2021<br>ລ້ານກີບ | 30 ມິຖຸນາ 2020<br>ລ້ານກີບ |
|---|---|---|
| **ລາຍຮັບດອກເບ້ຍ ແລະ ອື່ນໆ** | | |
| ບໍລິສັດແມ່ | 126.666 | 87.501 |
| **ລາຍຈ່າຍດອກເບ້ຍ ແລະ ອື່ນໆ** | | |
| ພາກສ່ວນທີ່ກ່ຽວຂ້ອງ | 51.086 | 48.753 |

ລາຍການເຄື່ອນໄຫວ ກັບສະພາບໍລິຫານຂອງທະນາຄານ

ຄ) ຜົນປະໂຫຍດໃຫ້ແກ່ສະພາບໍລິຫານ ແລະ ຄະນະອໍານວຍການ ແມ່ນມີລາຍລະອຽດດັ່ງລຸ່ມນີ້:

| | 30 ມິຖຸນາ 2021<br>ລ້ານກີບ | 30 ມິຖຸນາ 2020<br>ລ້ານກີບ |
|---|---|---|
| ເງິນເດືອນ | 708 | 690 |
| ເງິນບໍາເນັດ | 295 | 523 |
| ເງິນອຸດໜູນຕໍາແໜ່ງ | 453 | 468 |
| | **1.456** | **1.681** |

ງ) ຍອດຄົງເຫຼືອທີ່ເກີດຈາກ ລາຍຮັບດອກເບ້ຍ. ລາຍຈ່າຍດອກເບ້ຍ ແລະ ອື່ນໆ

ຍອດຄົງເຫຼືອ ໃນໄລຍະລາຍງານ ຂອງລາຍການຂອງພາກສ່ວນທີ່ກ່ຽວຂ້ອງ ມີດັ່ງຕໍ່ໄປນີ້:

| | 30 ມິຖຸນາ 2021<br>ລ້ານກີບ | 31 ທັນວາ 2020<br>ລ້ານກີບ |
|---|---|---|
| **ໜີ້ຕ້ອງຮັບ** | | |
| ບໍລິສັດແມ່ | 4.337.448 | 3.971.052 |
| ວິສາຫະກິດຂາຮຸ້ນ ແລະ ວິສາຫະກິດປະສົມ | 687.246 | 793.662 |
| ພາກສ່ວນທີ່ກ່ຽວຂ້ອງ | 13.500.619 | 10.455.970 |
| **ໜີ້ຕ້ອງສົ່ງ** | | |
| ວິສາຫະກິດຂາຮຸ້ນ ແລະ ວິສາຫະກິດປະສົມ | 1.020.299 | 991.987 |
| ພາກສ່ວນທີ່ກ່ຽວຂ້ອງ | 2.067.079 | 1.885.307 |